ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1687

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ......1687....../ກຊສ
ນະຄອນຫຼວງວຽງຈັນ, ວັນທີ..7..ເມສາ..2021.

# ຂໍ້ຕົກລົງ
# ວ່າດ້ວຍການຄວບຄຸມມົນລະພິດ

- ອີງຕາມ ໝວດ 2 ແລະ 3 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືຢັ້ງຢືນຄວາມສອດຄ່ອງດ້ານກົດໝາຍຂອງກົມນິຕິກຳ ສະບັບເລກທີ 147/ກຊສ.ກນກ, ລົງວັນທີ 16 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ສະບັບເລກທີ 0494/ກຊສ.ກຄມ, ລົງວັນທີ 18 ມີນາ 2021.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດ, ການຕິດຕາມ ກວດກາມົນລະພິດ, ມາດຕະການຄວບຄຸມມົນລະພິດໃນກໍລະນີເກີດເຫດການສຸກເສີນ, ກຳນົດເຂດອັນຕະລາຍ ແລະ ຄວາມສ່ຽງດ້ານມົນລະພິດ ເພື່ອຫຼຸດຜ່ອນ ແລະ ຈຳກັດຜົນກະທົບທີ່ເກີດຈາກມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ແນໃສ່ໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງມີຊີວິດອື່ນ ແລະ ລະບົບນິເວດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄວບຄຸມມົນລະພິດ**

ການຄວບຄຸມມົນລະພິດ ແມ່ນ ການສຳຫຼວດ ແລະ ຂຶ້ນບັນຊີ, ມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດທາງອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ຊຶ່ງມົນລະພິດດັ່ງກ່າວຕົ້ນຕໍແມ່ນເກີດຈາກເຄມີເປັນພິດ, ທາດກຳມັນຕະພາບລັງສີ ແລະ ສິ່ງເສດເຫຼືອ ທີ່ປົນເປື້ອນ ຫຼື ເຈືອປົນຢູ່ໃນອາກາດ, ດິນ, ນ້ຳ ບໍ່ໃຫ້ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ເກີດຈາກການດຳເນີນກິດຈະການໃດໜຶ່ງ ແລະ ທຳມະຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

**1.** ມົນລະພິດທີ່ເກີດຈາກທຳມະຊາດ ໝາຍເຖິງ ມົນລະພິດທີ່ເກີດຈາກ ໄຟໄໝ້ປ່າ, ພູເຂົາໄຟລະເບີດ, ຝຸ່ນລະອອງຈາກລົມ ຫຼື ພະຍຸ, ແຜ່ນດິນໄຫວ, ໄພນ້ຳຖ້ວມ, ການເຊາະເຈື່ອນຂອງດິນ;

**2. ມົນລະພິດທີ່ເກີດຈາກການກະທຳຂອງມະນຸດ** ໝາຍເຖິງ ມົນລະພິດທີ່ເກີດຈາກການດຳເນີນກິດຈະການຕ່າງໆ ເປັນຕົ້ນ ກະສິກຳ, ປ່າໄມ້, ບໍ່ແຮ່, ອຸດສາຫະກຳ, ສາທາລະນະສຸກ, ການສຶກສາຄົ້ນຄວ້າທົດລອງ, ການເຜົາຂີ້ເຫຍື້ອ, ການກຳຈັດສິ່ງເສດເຫຼືອ, ພາຫະນະ;

**3. ເຂດສຸກເສີນດ້ານມົນລະພິດ** ໝາຍເຖິງ ເຂດທີ່ເກີດມົນລະພິດຈາກກໍລະນີເຫດການສຸກເສີນ ຈາກການດຳເນີນກິດຈະການໃດໜຶ່ງ ທີ່ມີເຄມີເປັນພິດປົນເປື້ອນ ຫຼື ຄ່າຄວາມເຂັ້ມຂຸ້ນເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ ແລະ ສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ;

**4. ເຂດອັນຕະລາຍດ້ານມົນລະພິດ** ໝາຍເຖິງ ເຂດທີ່ມີເຄມີເປັນພິດປົນເປື້ອນ ຫຼື ຄ່າຄວາມເຂັ້ມຂຸ້ນເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ສົ່ງຜົນກະທົບຮ້າຍແຮງ ຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ ຊຶ່ງບໍ່ສາມາດຄວບຄຸມໄດ້;

**5. ມາດຕະຖານຄວາມປອດໄພ** ໝາຍເຖິງ ການວາງມາດຕະການປ້ອງກັນຜົນກະທົບ ທີ່ຈະເກີດຂຶ້ນໃນກິດຈະການໃດໜຶ່ງ ແລະ ຫຼຸດຜ່ອນຄວາມສ່ຽງທີ່ກໍ່ໃຫ້ເກີດມົນລະພິດ ເພື່ອຮັບປະກັນຊີວິດ, ສຸຂະພາບ ແລະ ຊັບສິນ;

**6. ນ້ຳມັນສະອາດ** ໝາຍເຖິງ ນ້ຳມັນທີ່ບໍ່ປົນເປື້ອນ ຫຼື ເຈືອປົນໂລຫະໜັກໜ້ອຍ, ຄວາມເປັນດ່າງຕ່ຳ ແລະ ກັ່ນຕອງໄດ້ຕາມມາດຕະຖານສາກົນທີ່ໄດ້ຮັບອະນຸຍາດ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

## ໝວດທີ 2
## ການສຳຫຼວດ, ການຂຶ້ນບັນຊີແຫຼ່ງກຳເນີດມົນລະພິດ, ການສ້າງແຜນທີ່ຄວບຄຸມມົນລະພິດ ແລະ ການນຳເຂົ້າສິ່ງເສດເຫຼືອ ແລະ ເຄມີອັນຕະລາຍ

### ມາດຕາ 5 ການສຳຫຼວດ ແລະ ການຂຶ້ນບັນຊີ ແຫຼ່ງກຳເນີດມົນລະພິດ

ການສຳຫຼວດມົນລະພິດ ແມ່ນ ການເກັບກຳຂໍ້ມູນ ແລະ ສຶກສາແຫຼ່ງກຳເນີດມົນລະພິດທາງ ອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ເປັນຕົ້ນ ປະລິມານການນຳໃຊ້ເຄມີເປັນພິດ, ປະລິມານສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ, ໄພທຳມະຊາດ ເພື່ອເປັນຂໍ້ມູນໃນການປະເມີນສະພາບມົນລະພິດ ແລະ ສ້າງແຜນທີ່ຄວບຄຸມມົນລະພິດ.

ການຂຶ້ນບັນຊີແຫຼ່ງກຳເນີດມົນລະພິດ ແມ່ນ ການສັງລວມຂໍ້ມູນຈາກການສຳຫຼວດມົນລະພິດທາງ ອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ເພື່ອສ້າງແຜນທີ່ຄວບຄຸມມົນລະພິດ, ຕິດຕາມ ກວດກາ, ວາງມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດ.

ການແບ່ງຄວາມຮັບຜິດຊອບໃນການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງກຳເນີດມົນລະພິດ ມີດັ່ງນີ້:

1. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ປະສານສົມທົບກັບບັນດາຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງກຳເນີດມົນລະພິດທາງ ອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ເປັນຕົ້ນ ມົນລະພິດທີ່ເກີດຈາກທຸລະກິດຄອບຄົວ, ປະລິມານການນຳໃຊ້ເຄມີເປັນພິດຈາກກິດຈະການຕ່າງໆ ເປັນຕົ້ນ ກະສິກຳ, ປ່າໄມ້ ຂະໜາດນ້ອຍ, ຫັດຖະກຳ, ປະລິມານສິ່ງເສດເຫຼືອທົ່ວໄປ ໃນຂອບເຂດຄວາມຮັບຜິດຊອບຂອງເມືອງ ແລ້ວລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ປະສານສົມທົບກັບບັນດາພະແນກການ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງກຳເນີດມົນລະພິດທາງ ອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ ເປັນຕົ້ນ ມົນລະພິດທີ່ເກີດຈາກການນຳໃຊ້ເຄມີເປັນພິດຈາກກິດຈະການຕ່າງໆ ເປັນຕົ້ນ ກະສິກຳ, ປ່າໄມ້ ຂະໜາດກາງ ແລະ ໃຫຍ່, ອຸດສາຫະກຳ, ກິດຈະການບໍ່ແຮ່ນັບຕັ້ງແຕ່ໄລຍະສຳຫຼວດ ແລະ ຂຸດຄົ້ນ, ບູລະນະຟື້ນຟູສິ່ງແວດລ້ອມ ແລະ ປິດບໍ່ແຮ່, ການສ້າງໂຄງລ່າງພື້ນຖານ; ປະລິມານສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ແລ້ວລາຍງານໃຫ້ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ;

3. ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ຮັບຜິດຊອບໃນການສັງລວມຜົນຂອງການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງກຳເນີດມົນລະພິດໃນຂອບເຂດທົ່ວປະເທດ ແລ້ວລາຍງານໃຫ້ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ.

### ມາດຕາ 6 ແຜນທີ່ຄວບຄຸມມົນລະພິດ

ແຜນທີ່ຄວບຄຸມມົນລະພິດ ແມ່ນ ຮູບແຜນທີ່ ທີ່ກຳນົດຈຸດທີ່ຕັ້ງແຫຼ່ງກຳເນີດມົນລະພິດທາງ ອາກາດ, ດິນ, ນ້ຳ ແລະ ສິ່ງລົບກວນ, ເຂດທີ່ມີຄວາມສ່ຽງດ້ານມົນລະພິດ. ແຜນທີ່ຄວບຄຸມມົນລະພິດດັ່ງກ່າວ ໃຫ້ສັງລວມເຂົ້າໃນຖານຂໍ້ມູນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນຂໍ້ມູນໃນການປະເມີນສະພາບມົນລະພິດ, ວາງມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດ, ຕິດຕາມ ກວດກາ ແລະ ວິເຄາະສະພາບການປ່ຽນແປງຂອງມົນລະພິດ ໃນແຕ່ລະໄລຍະ.

### ມາດຕາ 7 ການສ້າງແຜນທີ່ຄວບຄຸມມົນລະພິດ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ສ້າງແຜນທີ່ຄວບຄຸມມົນລະພິດພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍອີງໃສ່ຜົນຂອງການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງກຳເນີດມົນລະພິດ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບພະແນກການ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ. ຫຼັງຈາກສຳເລັດການສ້າງແຜນທີ່ດັ່ງກ່າວ ໃຫ້ລາຍງານກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ເພື່ອສັງລວມລາຍງານລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ.

ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ເປັນຜູ້ແນະນຳທາງດ້ານວິຊາການ ໃນການສ້າງແຜນທີ່ຄວບຄຸມມົນລະພິດ.

### ມາດຕາ 8 ການນຳເຂົ້າສິ່ງເສດເຫຼືອ ແລະ ເຄມີອັນຕະລາຍ

ສິ່ງເສດເຫຼືອທີ່ເປັນພິດ ແລະ ອັນຕະລາຍ ເປັນຕົ້ນ ສິ່ງເສດເຫຼືອເຈືອປົນເຄມີ, ກຳມັນຕະພາບລັງສີ, ສິ່ງເສດເຫຼືອອີເລັກໂຕຣນິກ, ໝໍ້ໄຟເກົ່າ ລວມທັງສິ່ງເສດເຫຼືອຕາມສົນທິສັນຍາບາເຊວ ແມ່ນຫ້າມນຳເຂົ້າມາໃນດິນແດນຂອງ ສປປ ລາວ ເພື່ອນຳໃຊ້ ຫຼື ນຳໄປຜະລິດຄືນໃໝ່. ສຳລັບການນຳເຂົ້າເຄມີອັນຕະລາຍ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງເຄມີ.

## ໝວດທີ 3
## ມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດທາງອາກາດ

### ມາດຕາ 9 ມາດຕະການຄວບຄຸມມົນລະພິດທາງອາກາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການຄວບຄຸມມົນລະພິດທາງອາກາດ ທີ່ເກີດຈາກຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ທີ່ເຈືອປົນໃນອາກາດ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ດັ່ງນີ້:

ກ. ມາດຕະການຄວບຄຸມມົນລະພິດທາງອາກາດ ທີ່ເກີດຈາກຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ:

1. ສ້າງລະບົບບຳບັດອາກາດ ໃຫ້ໄດ້ມາດຕະຖານຕາມແຕ່ລະປະເພດໂຮງງານອຸດສາຫະກຳ ເພື່ອກັ່ນກອງ, ດັກເກັບ ຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ກ່ອນປ່ອຍອອກສູ່ສິ່ງແວດລ້ອມ;

2. ຕິດຕາມ ກວດກາ ຄຸນນະພາບອາກາດ ຕາມແຫຼ່ງກຳເນີດມົນລະພິດ ແລະ ຈຸດທີ່ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດມົນລະພິດ ຢ່າງເປັນປົກກະຕິ;

3. ການເກັບຮັກສາ ນ້ຳມັນເຊື້ອໄຟ ແລະ ຖ່ານຫີນ ທີ່ກໍ່ໃຫ້ເກີດມົນລະພິດທາງອາກາດ ໃຫ້ເກັບຮັກສາ ໃນສະຖານທີ່ປິດ ແລະ ເປີດ ຕ້ອງອອກແບບ ແລະ ສ້າງລະບົບສາງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ມີລະບົບການເກັບຮັກສາທີ່ປອດໄພ. ສຳລັບການເກັບຮັກສາຖ່ານຫີນໃນສະຖານທີ່ເປີດ ຕ້ອງມີລະບົບພົ່ນນ້ຳ ເພື່ອຄວບຄຸມຝຸ່ນລະອອງຂຶ້ນສູ່ອາກາດ;

4. ການເຜົານ້ຳມັນເຊື້ອໄຟ ແລະ ຖ່ານຫີນ ຕ້ອງນຳໃຊ້ເຕັກໂນໂລຊີ ແລະ ວັດຖຸດິບ ທີ່ເປັນມິດກັບສິ່ງແວດລ້ອມ ເປັນຕົ້ນ ນ້ຳມັນສະອາດ, ຊີວະມວນ, ອາຍແກັສ, ຖ່ານຫີນ ທີ່ໃຫ້ພະລັງງານສູງ ແລະ ສະອາດ ເພື່ອຄວບຄຸມມົນລະພິດທາງອາກາດ ເຊັ່ນ ສານເຄມີ ຊັລເຟີ ໄດອ໊ອກໄຊດ໌, ໄນໂຕຣເຈນ ໄດອ໊ອກໄຊດ໌, ໄຮໂດຣເຈນ ຄູ້ລິກ, ໄດອອກຊິນ, ບາຫຼອດ, ແຄັດມຽມ, ຊືນ ຊຶ່ງກໍ່ໃຫ້ເກີດເປັນຝົນກົດ, ທາດອາຍເຮືອນແກ້ວ ທີ່ເປັນສາເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ;

5. ກ່ອນຈະດຳເນີນຂະບວນການເຜົາ ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ຕ້ອງຄັດແຍກ ແລະ ກຳຈັດສິ່ງເສດເຫຼືອດັ່ງກ່າວໃນສະຖານທີ່ ທີ່ໄດ້ກຳນົດໄວ້ສະເພາະ;

6. ພາຫະນະທີ່ໄດ້ນຳໃຊ້ແລ້ວ ຜ່ານການກວດກາເຕັກນິກ ບໍ່ໄດ້ມາດຕະຖານ ກໍ່ໃຫ້ເກີດມີການປ່ອຍຄວັນອາຍເສຍຈາກພາຫະນະນັ້ນ ເຈົ້າຂອງພາຫະນະຕ້ອງບຳລຸງຮັກສາ ແລະ ສ້ອມແປງ ໃຫ້ໄດ້ມາດຕະຖານຄວບຄຸມມົນລະພິດທາງອາກາດຈາກພາຫະນະ;

7. ປູກຕົ້ນໄມ້ເປັນພື້ນທີ່ເຂດກັນຊົນກວມເອົາ ສິບ ສ່ວນຮ້ອຍຂຶ້ນໄປຂອງພື້ນທີ່ ຫຼື ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ເພື່ອຊ່ວຍຫຼຸດຜ່ອນຝຸ່ນລະອອງ ແລະ ອາກາດທີ່ເປັນພິດ;

8. ສ້າງລະບົບບຳບັດອາກາດ ໃຫ້ໄດ້ມາດຕະຖານຕາມແຕ່ລະປະເພດຮ້ານອາຫານ ເພື່ອກັ່ນກອງ, ດັກເກັບ ຄວັນ ຫຼື ທາດອາຍພິດ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ກ່ອນປ່ອຍອອກສູ່ສິ່ງແວດລ້ອມ;

ຂ. ມາດຕະການຄວບຄຸມມົນລະພິດທາງອາກາດ ທີ່ເກີດຈາກຄົວເຮືອນ:

1. ບໍ່ໃຫ້ຈູດຂີ້ເຫຍື້ອ, ສິ່ງເສດເຫຼືອອັນຕະລາຍ, ເຄມີ, ຈູດປ່າ, ຈູດທົ່ງນາ, ຈູດສວນ ແບບຊະຊາຍ ເພື່ອຄວບຄຸມ ແລະ ຫຼຸດຜ່ອນ ມົນລະພິດທາງອາກາດ;

2. ຫຼຸດຜ່ອນການນຳໃຊ້ຟືນໃນຄົວເຮືອນ ໂດຍການສົ່ງເສີມການນຳໃຊ້ພະລັງງານທົດແທນ ເປັນຕົ້ນ ແກັສຊີວະພາບ, ພະລັງງານໄຟຟ້າ.

ຄ. ມາດຕະການຄວບຄຸມມົນລະພິດທາງອາກາດ ທີ່ອາດເກີດ ຫຼື ເກີດຈາກໄພທຳມະຊາດ:

ເຂດທີ່ໄດ້ປະກາດເປັນເຂດຄວບຄຸມມົນລະພິດທາງອາກາດ ທີ່ອາດເກີດ ຫຼື ເກີດຈາກໄພທຳມະຊາດຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສຳຫຼວດ, ກຳນົດ ແລະ ສ້າງແຜນທີ່ເຂດຄວບຄຸມຄວາມສ່ຽງທີ່ອາດເກີດມົນລະພິດທາງອາກາດຈາກໄພທຳມະຊາດ;

2. ປະເມີນລະດັບຄວາມເປັນອັນຕະລາຍຂອງມົນລະພິດທາງອາກາດ ທີ່ເກີດຈາກໄພທຳມະຊາດ;

3. ກຳນົດມາດຕະການແກ້ໄຂ ມົນລະພິດທາງອາກາດ ທີ່ເກີດຈາກໄພທຳມະຊາດ.

ມາດຕາ 10 ມາດຕະການແກ້ໄຂມົນລະພິດທາງອາກາດ

ໃນກໍລະນີເກີດມົນລະພິດທາງອາກາດຈາກ ຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ທີ່ເຈືອປົນໃນອາກາດຈາກຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ ຜູ້ພັດທະນາໂຄງການລົງທຶນ ຫຼື ຜູ້ດຳເນີນກິດຈະການນັ້ນ ຕ້ອງຮັບຜິດຊອບແກ້ໄຂຕົ້ນເຫດ ແລະ ຜົນກະທົບຂອງເຫດການດັ່ງກ່າວ ພ້ອມທັງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ມວນຊົນຢ່າງທັນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວ.

ໃນກໍລະນີເກີດມົນລະພິດທາງອາກາດຈາກ ຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ທີ່ເຈືອປົນໃນອາກາດ ທີ່ເກີດຈາກຄົວເຮືອນ ບຸກຄົນ ຫຼື ຄົວເຮືອນນັ້ນ ຕ້ອງຮັບຜິດຊອບແກ້ໄຂຕົ້ນເຫດ ແລະ ຜົນກະທົບຂອງເຫດການດັ່ງກ່າວ ພ້ອມທັງລາຍງານໃຫ້ອົງການປົກຄອງບ້ານ ບ່ອນທີ່ຕົນອາໄສຢູ່ ຫຼື ບ້ານບ່ອນທີ່ເກີດເຫດ ແລະ ຈະຖືກກ່າວເຕືອນ.

ໃນກໍລະນີເກີດມົນລະພິດທາງອາກາດຈາກ ຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ທີ່ເຈືອປົນໃນອາກາດ ທີ່ເກີດຈາກໄພທຳມະຊາດ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ປະສານສົມທົບກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃຫ້ປະຕິບັດມາດຕະການແກ້ໄຂ ດັ່ງນີ້:

1. ຈັດພາຫະນະ, ວັດຖຸປະກອນ, ກຳລັງພົນ, ໜ່ວຍແພດ ເພື່ອແກ້ໄຂເຫດການດັ່ງກ່າວ ໂດຍທັນທີ ແລະ ເຄື່ອນຍ້າຍປະຊາຊົນ ແລະ ຊັບສິນ ອອກຈາກພື້ນທີ່ດັ່ງກ່າວ ໂດຍປະຕິບັດມາດຕະການຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ, ຊັບສິນ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກມົນລະພິດທາງອາກາດ ແລະ ຜູ້ມາຊ່ວຍ ເຫຼືອ;

2. ຈັດສັນທີ່ພັກຊົ່ວຄາວ, ສາງເກັບມ້ຽນເຄື່ອງ, ການຊ່ວຍເຫຼືອດ້ານການແພດ, ການຈັດສົ່ງ, ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນຢ່າງທົ່ວເຖິງ ແລະ ທັນເວລາ;

3. ດຳເນີນການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອເບື້ອງຕົ້ນ ເພື່ອວາງແຜນໃຫ້ການຊ່ວຍເຫຼືອສຸກເສີນ ພ້ອມທັງກຳນົດວິທີການ ແລະ ມາດຕະການປັບປຸງທີ່ເໝາະສົມ ເພື່ອຟື້ນຟູຄືນເຂດດັ່ງກ່າວໃຫ້ກັບຄືນສູ່ປົກກະຕິ.

## ໝວດທີ 4
## ມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດທາງດິນ

ມາດຕາ 11 ມາດຕະການຄວບຄຸມມົນລະພິດທາງດິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການຄວບຄຸມມົນລະພິດທາງດິນ ທີ່ເກີດຈາກການປົນເປື້ອນສິ່ງທີ່ເປັນພິດໃນການນຳໃຊ້ເຄມີ, ທາດກຳມັນຕະພາບລັງສີ, ການບຳບັດ, ຖິ້ມ, ຝັງ ຫຼື ທຳລາຍສິ່ງເສດເຫຼືອທີ່ເປັນພິດ ແລະ ອັນຕະລາຍ ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ໃນຂະບວນການຜະລິດຕ່າງໆ ເປັນຕົ້ນ ກະສິກຳ, ປ່າໄມ້, ບໍ່ແຮ່, ອຸດສາຫະກຳ, ຫັດຖະກຳ, ສາທາລະນະສຸກ, ການສຶກສາຄົ້ນຄວ້າ ທີ່ກະທົບໃສ່ໂຄງສ້າງຂອງດິນ, ເຮັດໃຫ້ດິນເສື່ອມໂຊມ, ດິນເສຍຄຸນນະພາບ ໂດຍປະຕິບັດມາດຕະການຄວບຄຸມ ດັ່ງນີ້:

1. ການນຳໃຊ້ເຄມີ ເປັນຕົ້ນ ຢາປາບສັດຕູພືດ, ປຸ໋ຍເຄມີ ເຂົ້າໃນຂະບວນການຜະລິດໃນກິດຈະການ ກະສິກຳ, ປ່າໄມ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ, ປຶ້ມຄູ່ມືແນະນຳຂອງຂະແໜງການກະສິກຳ ແລະ ປ່າໄມ້;

2. ການນຳໃຊ້ເຄມີ ເປັນຕົ້ນ ສານໄຊຍາໄນສ໌, ສານບາຫຼອດ ເຂົ້າໃນຂະບວນການຜະລິດໃນກິດຈະການແຮ່ທາດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ, ປຶ້ມຄູ່ມືແນະນຳຂອງຂະແໜງການພະລັງງານ ແລະ ບໍ່ແຮ່;

3. ການນຳໃຊ້ເຄມີ ເຂົ້າໃນຂະບວນການຜະລິດ ໃນກິດຈະການ ອຸດສາຫະກຳ ແລະ ຫັດຖະກຳ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ, ປຶ້ມຄູ່ມືແນະນຳຂອງຂະແໜງການອຸດສາຫະກຳ ແລະ ການຄ້າ;

4. ການນຳໃຊ້ເຄມີ ເຂົ້າໃນຂະບວນການຜະລິດ ໃນກິດຈະການ ສາທາລະນະສຸກ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ, ປຶ້ມຄູ່ມືແນະນຳຂອງຂະແໜງການສາທາລະນະສຸກ;

5. ການກຳຈັດ, ຖິ້ມ, ຝັງ ຫຼື ທຳລາຍເຄມີ, ສິ່ງເສດເຫຼືອທີ່ເປັນພິດ ແລະ ອັນຕະລາຍ ໃຫ້ດຳເນີນໃນສະຖານທີ່ ທີ່ໄດ້ກຳນົດໄວ້ສະເພາະ ແລະ ໃຫ້ຖືກຕາມມາດຕະຖານເຕັກນິກ;

6. ໃນເຂດບໍລິເວນທີ່ເຫັນວ່າມີຄວາມສ່ຽງຈະເກີດມົນລະພິດທາງດິນ ທີ່ເກີດຈາກການປົນເປື້ອນສິ່ງທີ່ເປັນພິດໃນການນຳໃຊ້ເຄມີ, ທາດກຳມັນຕະພາບລັງສີ, ການບຳບັດ, ຖິ້ມ, ຝັງ ຫຼື ທຳລາຍສິ່ງເສດເຫຼືອທີ່ເປັນພິດ ແລະ ອັນຕະລາຍ ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ຕ້ອງດຳເນີນການຕິດຕາມ ແລະ ວິໄຈຄຸນນະພາບດິນ ໃນເຂດດັ່ງກ່າວ.

### ມາດຕາ 12 ມາດຕະການແກ້ໄຂມົນລະພິດທາງດິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການແກ້ໄຂມົນລະພິດທາງດິນທີ່ເກີດຈາກການປົນເປື້ອນສິ່ງທີ່ເປັນພິດ ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ກະທົບໃສ່ໂຄງສ້າງຂອງດິນ, ເຮັດໃຫ້ດິນເສື່ອມໂຊມ, ດິນເສຍຄຸນນະພາບ ດັ່ງນີ້:

1. ທີ່ດິນກະສິກຳ ໃນເຂດທີ່ດິນທີ່ໄດ້ຮັບຜົນກະທົບໂຄງສ້າງຂອງດິນ, ດິນເສື່ອມໂຊມ, ດິນເສຍຄຸນນະພາບ ໃຫ້ປັບປຸງຄຸນນະພາບດິນຄືນ ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ດ້ວຍການນຳໃຊ້ຝຸ່ນຕ່າງໆ ເປັນຕົ້ນ ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນຂຽວ, ຂີ້ເຈຍ, ປູນ, ຖ່ານຕົມ, ຫີນກາວ;

2. ພາຍຫຼັງປິດບໍ່ແຮ່ ໃຫ້ການດຳເນີນການປັບປຸງຄຸນນະພາບດິນ ຕາມແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ປະຕິບັດຕາມດຳລັດວ່າດ້ວຍການປິດບໍ່ແຮ່ ສະບັບເລກທີ 252/ລບ, ລົງວັນທີ 26 ພຶດສະພາ 2020;

3. ພາຍຫຼັງປິດສະໜາມກຳຈັດຂີ້ເຫຍື້ອ ໃຫ້ປັບປຸງຄຸນນະພາບດິນຄືນ ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ດ້ວຍການປູກຕົ້ນໄມ້, ຫຍ້າ ຫຼື ພືດອື່ນໆ.

## ໝວດທີ 5
## ມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດທາງນ້ຳ

### ມາດຕາ 13 ມາດຕະການຄວບຄຸມມົນລະພິດທາງນ້ຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການຄວບຄຸມມົນລະພິດທາງນ້ຳ ທີ່ເກີດຈາກການປົນເປື້ອນສິ່ງທີ່ເປັນພິດໃນນ້ຳ ໃນການນຳໃຊ້ເຄມີ, ຖິ້ມສິ່ງເສດເຫຼືອທົ່ວໄປ ແລະ ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ດັ່ງນີ້:

1. ສ້າງລະບົບບຳບັດນ້ຳເປື້ອນໃຫ້ໄດ້ມາດຕະຖານ ຕາມແຕ່ລະປະເພດໂຮງງານອຸດສາຫະກຳ ເພື່ອຄວບຄຸມການປ່ອຍນ້ຳເປື້ອນ ທີ່ຜ່ານການບຳບັດແລ້ວ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ;

2. ບັນດາກິດຈະການ ການບໍລິການ ເປັນຕົ້ນ ໂຮງແຮມ, ເຮືອນພັກ, ຕຶກອາຄານ, ເຮືອນຈັດສັນ, ຮ້ານອາຫານ, ຕະຫຼາດ, ໂຮງໝໍ, ຟາມລ້ຽງສັດ, ບ່ອນລ້າງລົດ ຕ້ອງສ້າງລະບົບບຳບັດນ້ຳເປື້ອນ ໃຫ້ໄດ້ມາດຕະຖານຕາມແຕ່ລະປະເພດຂອງແຕ່ລະກິດຈະການ ເພື່ອຄວບຄຸມການປ່ອຍນ້ຳເປື້ອນ ທີ່ຜ່ານການບຳບັດແລ້ວ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ;

3. ເຂດຊຸມຊົນທີ່ອາໄສຢູ່ໃນເຂດຮ່ອງນ້ຳສາທາລະນະ ບຸກຄົນທີ່ຢູ່ໃນເຂດດັ່ງກ່າວ ໃຫ້ສ້າງອ່າງບຳບັດນ້ຳເປື້ອນ ກ່ອນປ່ອຍລົງຮ່ອງນ້ຳສາທາລະນະ ຫຼື ແຫຼ່ງນ້ຳທຳມະຊາດ ເພື່ອຄວບຄຸມການປ່ອຍນ້ຳເປື້ອນ ທີ່ຜ່ານການບຳບັດແລ້ວ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ;

4. ການນຳໃຊ້ເຄມີ ເປັນຕົ້ນ ຢາປາບສັດຕູພືດ, ປຸ໋ຍເຄມີ, ເຂົ້າໃນຂະບວນການຜະລິດໃນກິດຈະການ ກະສິກຳ, ປ່າໄມ້ ໃນເຂດໃກ້ແຫຼ່ງນ້ຳທຳມະຊາດ ຕ້ອງຮັບປະກັນບໍ່ໃຫ້ໄຫຼລົງແຫຼ່ງນ້ຳ ແລະ ໃຫ້ປະຕິບັດຕາມນິຕິກຳທີ່ກ່ຽວຂ້ອງ ແລະ ປຶ້ມຄູ່ມືແນະນຳຂອງຂະແໜງການກະສິກຳ ແລະ ປ່າໄມ້;

5. ກວດກາຄຸນນະພາບນ້ຳຕາມແຫຼ່ງກຳເນີດມົນລະພິດທາງນ້ຳ ແລະ ຈຸດທີ່ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດມົນລະພິດ ຢ່າງເປັນປົກກະຕິ.

### ມາດຕາ 14 ມາດຕະການແກ້ໄຂມົນລະພິດທາງນ້ຳ

ໃນກໍລະນີເກີດມົນລະພິດທາງນ້ຳຈາກຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ ຜູ້ພັດທະນາໂຄງການລົງທຶນ ຫຼື ຜູ້ດຳເນີນກິດຈະການນັ້ນ ຕ້ອງຮັບຜິດຊອບແກ້ໄຂຕົ້ນເຫດ ແລະ ຜົນກະທົບຂອງເຫດການດັ່ງກ່າວ ພ້ອມທັງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ມວນຊົນຢ່າງທັນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວ.

ໃນກໍລະນີເກີດມົນລະພິດທາງນ້ຳ ທີ່ເກີດຈາກການປ່ອຍນ້ຳເປື້ອນຈາກຄົວເຮືອນ ໂດຍການທີ່ບໍ່ໄດ້ຜ່ານການບຳບັດ ບຸກຄົນ ຫຼື ຄົວເຮືອນນັ້ນ ຕ້ອງຮັບຜິດຊອບແກ້ໄຂຕົ້ນເຫດ ແລະ ຜົນກະທົບຂອງເຫດການດັ່ງກ່າວ ພ້ອມທັງລາຍງານໃຫ້ອົງການປົກຄອງບ້ານ ບ່ອນທີ່ຕົນອາໄສຢູ່ ຫຼື ບ້ານບ່ອນທີ່ເກີດເຫດ ແລະ ຈະຖືກກ່າວເຕືອນ.

## ໝວດທີ 6
## ມາດຕະການຄວບຄຸມ ແລະ ແກ້ໄຂບັນຫາສິ່ງລົບກວນ

### ມາດຕາ 15 ມາດຕະການຄວບຄຸມສິ່ງລົບກວນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການຄວບຄຸມສິ່ງລົບກວນ ເປັນຕົ້ນ ສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕະຖານສິ່ງແວດລ້ອມແຫ່ງຊາດ ດັ່ງນີ້:

1. ສ້າງລະບົບຄວບຄຸມ ແລະ ເກັບສຽງ, ກັນແສງ, ລະບົບລະບາຍກິ່ນ, ລະບົບກັນຄວາມຮ້ອນ, ລະບົບຫຼຸດຜ່ອນການສັ່ນສະເທືອນ ໃຫ້ໄດ້ມາດຕະຖານ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ;

2. ຕິດຕາມ ກວດກາ ລະບົບຄວບຄຸມຕາມທີ່ໄດ້ກຳນົດໄວ້ໃນຂໍ້ ໜຶ່ງ ເທິງນີ້ ເພື່ອຮັບປະກັນບໍ່ໃຫ້ມີສິ່ງລົບກວນ ຫຼື ມີສິ່ງລົບກວນ ແຕ່ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້;

3. ການຄວບຄຸມສິ່ງລົບກວນຈາກການບັນເທີງ ໃຫ້ປະຕິບັດຕາມມາດຕະຖານລວມ ແລະ ມາດຕະຖານສະເພາະຂອງມາດຕະຖານບັນເທີງ ຕາມທີ່ໄດ້ກຳນົດໃນມາດຕາ 19 ຂອງດຳລັດວ່າດ້ວຍການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 2 ຕຸລາ 2017.

### ມາດຕາ 16 ມາດຕະການແກ້ໄຂບັນຫາສິ່ງລົບກວນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ໃນກໍລະນີໄດ້ກໍ່ໃຫ້ເກີດສິ່ງລົບກວນ ເປັນຕົ້ນ ສຽງ, ແສງ, ກິ່ນ, ຄວາມຮ້ອນ, ການສັ່ນສະເທືອນ ຕ້ອງໄດ້ປັບປຸງ ແລະ ແກ້ໄຂບັນຫາດັ່ງກ່າວ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

ຖ້າຫາກບໍ່ປັບປຸງ ແລະ ແກ້ໄຂບັນຫາສິ່ງລົບກວນຕາມທີ່ກຳນົດໄວ້ໃນວັກ ໜຶ່ງ ຂອງມາດຕານີ້ ຈະຖືກກ່າວເຕືອນ ຫຼື ສະເໜີໃຫ້ໂຈະກິດຈະການ ຫຼື ຖືກປັບໃໝ ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ.

## ໝວດທີ 7
## ມາດຕະການປ້ອງກັນ ແລະ ຄວບຄຸມມົນລະພິດໃນກໍລະນີເກີດເຫດການສຸກເສີນ, ການກຳນົດເຂດ ອັນຕະລາຍ ແລະ ຄວາມສ່ຽງດ້ານມົນລະພິດ

**ມາດຕາ 17 ມາດຕະການປ້ອງກັນມົນລະພິດທີ່ອາດຈະເກີດຂຶ້ນໃນກໍລະນີເຫດການສຸກເສີນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງສ້າງແຜນ ແລະ ວາງມາດຕະ ການປ້ອງກັນມົນລະພິດ ທີ່ອາດຈະເກີດຂຶ້ນໃນກໍລະນີເຫດການສຸກເສີນ ເພື່ອປ້ອງກັນ ແລະ ຈຳກັດມົນລະພິດທີ່ອາດຈະເກີດຂຶ້ນນັ້ນ ໂດຍໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ.

**ມາດຕາ 18 ການຄວບຄຸມມົນລະພິດທີ່ເກີດຂຶ້ນໃນກໍລະນີເຫດການສຸກເສີນ**

ກໍລະນີເກີດເຫດການສຸກເສີນດ້ານມົນລະພິດ ທີ່ເກີດຈາກການດຳເນີນກິດຈະການໃດໜຶ່ງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງກິດຈະການນັ້ນ ຕ້ອງມີວິທີການ ແລະ ນຳໃຊ້ມາດຕະການຄວບຄຸມມົນລະພິດ ຕາມແຜນ ແລະ ມາດຕະການປ້ອງກັນມົນລະພິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງແຈ້ງເຕືອນ, ເຄື່ອນຍ້າຍປະຊາຊົນ ແລະ ຊັບສິນ ອອກຈາກພື້ນທີ່, ກະກຽມຄວບຄຸມ ແລະ ແກ້ໄຂຜົນກະທົບທີ່ເກີດຂຶ້ນ, ປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອເບື້ອງຕົ້ນ ເພື່ອໃຫ້ການຊ່ວຍເຫຼືອສຸກເສີນ ພ້ອມທັງລາຍງານຢ່າງທັນການ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນທ້ອງຖິ່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ຕ້ອງລາຍງານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງທັນການ ເພື່ອແຈ້ງເຕືອນ, ກະກຽມເຄື່ອນຍ້າຍປະຊາຊົນ ແລະ ຊັບສິນ ອອກຈາກພື້ນທີ່ ແລະ ກຳນົດມາດຕະການຊ່ວຍເຫຼືອເບື້ອງຕົ້ນ ພ້ອມທັງລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເພື່ອລາຍງານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຕິດຕາມ ແລະ ຊ່ວຍໃນການແກ້ໄຂເຫດສຸກເສີນດ້ານມົນລະພິດ ພ້ອມທັງແຈ້ງໃຫ້ລັດຖະບານ.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ປະສານສົມທົບກັບຫ້ອງການ, ອົງການປົກຄອງບ້ານ, ເຈົ້າຂອງກິດຈະການທີ່ກ່ຽວຂ້ອງ ນຳໃຊ້ມາດຕະການຄວບຄຸມ ແລະ ແກ້ໄຂພ້ອມທັງບູລະນະຟື້ນຟູ ຜົນກະທົບທີ່ເກີດຈາກເຫດການສຸກເສີນດ້ານມົນລະພິດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງກິດຈະການນັ້ນ ຕ້ອງຮັບຜິດຊອບ ດັ່ງນີ້:

1. ຄ່າໃຊ້ຈ່າຍໃນການເຄື່ອນຍ້າຍປະຊາຊົນ ແລະ ຊັບສິນອອກຈາກພື້ນທີ່ເກີດເຫດການສຸກເສີນດ້ານມົນລະພິດ ເປັນຕົ້ນ ຄ່າພາຫະນະ, ວັດຖຸປະກອນ, ກຳລັງພົນ, ໜ່ວຍແພດ;

2. ການບູລະນະຟື້ນຟູເຂດພື້ນທີ່ເກີດເຫດການສຸກເສີນດ້ານມົນລະພິດ ໃຫ້ກັບຄືນສູ່ສະພາບປົກກະຕິ ແລະ ລະບົບນິເວດໃຫ້ມີຄວາມສົມດູນ ລວມທັງຊົດເຊີຍ ຫຼື ທົດແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນໃນເຂດພື້ນທີ່ໄດ້ຮັບຜົນກະທົບນັ້ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 19 ການຄວບຄຸມມົນລະພິດໃນເຂດອັນຕະລາຍດ້ານມົນລະພິດ**

ຫຼັງຈາກເກີດເຫດການສຸກເສີນດ້ານມົນລະພິດ ຫຼື ເກີດມົນລະພິດ ທາງອາກາດ, ດິນ, ນ້ຳ ຢ່າງຮ້າຍແຮງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນຜູ້ກຳນົດຂອບເຂດ ແລະ ປະກາດເປັນພື້ນທີ່ອັນຕະລາຍດ້ານມົນລະພິດ ແລ້ວລາຍງານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຮັບຊາບ ແລະ ຊີ້ນຳໃນການແກ້ໄຂບັນຫາດັ່ງກ່າວ. ຖ້າຫາກມີຜົນກະທົບຮ້າຍແຮງເກີນຄວາມສາມາດແກ້ໄຂໄດ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ຕ້ອງລາຍງານໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະກາດເຂດດັ່ງກ່າວເປັນເຂດອັນຕະລາຍດ້ານມົນລະພິດ ພ້ອມທັງແຈ້ງໃຫ້ລັດຖະບານ ຮັບຊາບ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ປະສານສົມທົບກັບພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ, ເຈົ້າຂອງກິດຈະການທີ່ກ່ຽວຂ້ອງ ນຳໃຊ້ມາດຕະການຄວບຄຸມ ແລະ ແກ້ໄຂ ພ້ອມທັງບູລະນະຟື້ນຟູເຂດອັນຕະລາຍດ້ານມົນລະພິດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງກິດຈະການນັ້ນ ຕ້ອງຮັບຜິດຊອບ ດັ່ງນີ້:

1. ຄ່າໃຊ້ຈ່າຍໃນການເຄື່ອນຍ້າຍປະຊາຊົນ ແລະ ຊັບສິນອອກຈາກພື້ນທີ່ ທີ່ໄດ້ກຳນົດເປັນເຂດອັນຕະລາຍດ້ານມົນລະພິດ ເປັນຕົ້ນ ຄ່າພາຫະນະ, ວັດຖຸປະກອນ, ກຳລັງພົນ, ໜ່ວຍແພດ;

2. ການບູລະນະຟື້ນຟູເຂດພື້ນທີ່ ທີ່ໄດ້ກຳນົດເປັນເຂດອັນຕະລາຍດ້ານມົນລະພິດ ໃຫ້ກັບຄືນສູ່ສະພາບປົກກະຕິ ແລະ ລະບົບນິເວດ ໃຫ້ມີຄວາມສົມດູນ ລວມທັງຊົດເຊີຍ ຫຼື ທົດແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນໃນເຂດພື້ນທີ່ໄດ້ຮັບຜົນກະທົບນັ້ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 20 ເຂດທີ່ມີຄວາມສ່ຽງດ້ານມົນລະພິດ

ເຂດທີ່ມີຄວາມສ່ຽງດ້ານມົນລະພິດ ເຈົ້າຂອງກິດຈະການ ຕ້ອງຕິດຕັ້ງອຸປະກອນ ຫຼື ເຄື່ອງວັດແທກມົນລະພິດທາງອາກາດ, ນໍ້າ ແລະ ສິ່ງລົບກວນ ພ້ອມທັງລາຍງານຂໍ້ມູນການວັດແທກດັ່ງກ່າວ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ເພື່ອຕິດຕາມສະພາບມົນລະພິດ, ເປັນຂໍ້ມູນໃນການວິເຄາະ ແລະ ປະເມີນຜົນການຄວບຄຸມ ພ້ອມທັງກຳນົດກຸ່ມຄົນທີ່ອາດຈະໄດ້ຮັບຜົນກະທົບ ເພື່ອແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ຊອກຫາມາດຕະການຄວບຄຸມ, ປ້ອງກັນ ແລະ ແກ້ໄຂບັນຫາມົນລະພິດທີ່ອາດຈະເກີດຂຶ້ນ.

## ໝວດທີ 8
## ການນຳໃຊ້ມາດຕະຖານສາກົນ ແລະ ການ ກວດກາວິຊາການ ກ່ຽວກັບການຄວບຄຸມມົນລະພິດ

### ມາດຕາ 21 ການນຳໃຊ້ມາດຕະຖານສາກົນໃນການຄວບຄຸມມົນລະພິດ

ໃນການຄວບຄຸມມົນລະພິດ ໃຫ້ປະຕິບັດຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້ ແຕ່ໃນກໍລະນີໂຕວັດແທກຄ່າຄວາມເຂັ້ມຂຸ້ນຂອງທາດເຄມີ ແລະ ສິ່ງທີ່ເຈືອປົນ ບໍ່ໄດ້ກຳນົດໃນມາດຕະຖານດັ່ງກ່າວ ແມ່ນໃຫ້ນຳໃຊ້ມາດຕະຖານສາກົນ ແລະ ຄູ່ມືແນະນຳ ກ່ຽວກັບການຄວບຄຸມມົນລະພິດ ເປັນຕົ້ນ ມາດຕະຖານຂອງອົງການອະນາໄມໂລກ, ອົງການອາຫານ ແລະ ການກະເສດ.

ກ່ອນຈະນຳໃຊ້ມາດຕະຖານສາກົນ ແລະ ຄູ່ມືແນະນຳ ກ່ຽວກັບການຄວບຄຸມມົນລະພິດ ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 22 ການກວດກາວິຊາການ ກ່ຽວກັບການຄວບຄຸມມົນລະພິດ

ໃນການດຳເນີນການຕິດຕາມ ກວດກາການຈັດຕັ້ງປະຕິບັດມາດຕະການຄວບຄຸມມົນລະພິດ ໃຫ້ດຳເນີນໄປພ້ອມກັບການກວດກາວິຊາການດ້ານສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 23 ການຈັດຕັ້ງປະຕິບັດ

ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ອອກປຶ້ມຄູ່ມືແນະນຳດ້ານວິຊາການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ກົມຄວບຄຸມ ແລະ ຕິດຕາມ ກວດກາມົນລະພິດ ປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້.

ມາດຕາ 24 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ບ.ບຸນຄຳ ວໍລະຈິດ